# ແຈ້ງການ

## ກ່ຽວກັບໂຄງການ ກອງທຶນຮ່ວມມືສາກົນເພື່ອການສຶກສາ ໄລຍະສອງ

ປະຈຸບັນກະຊວງສຶກສາທິການ ແລະ ກິລາ ກໍາລັງກະກຽມໂຄງການ ກອງທຶນຮ່ວມມືສາກົນເພື່ອການສຶກສາໄລຍະສອງ ໂດຍໄດ້ຮັບທຶນຮ່ວມສາກົນເພື່ອການສຶກສາ . ເປົ້າໝາຍຂອງໂຄງການແມ່ນເພື່ອຊ່ວຍລັດຖະບານ ສ.ປ.ປ. ລາວ ໃນການປັບປຸງປະສິດທິຜົນຂອງໂຮງຮຽນ ໃນລະດັບຊັ້ນກຽມປະຖົມ ແລະ ປະຖົມສຶກສາ. ການເພີ່ມປະສິດທິຜົນຂອງໂຮງຮຽນ ແມ່ນໂດຍມີການເພີ່ມ (ກ) ເງິນບໍລິຫານໃຫ້ທຸກໆລະດັບ ໃຫ້ໂຮງຮຽນ, ເມືອງ ແລະ ແຂວງ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ທຸກໆລະດັບໃນການຄຸ້ມຄອງຊັບພະຍາກອນທີ່ໄດ້ຮັບ; (ຂ) ປັບປຸງສະພາບແວດລ້ອມ ການຮຽນ-ການສອນ ໃຫ້ດີຂຶ້ນໂດຍມີການປັບປຸງວິທີການຮຽນ ແລະ ສິດສອນ ເພື່ອສະນັບຊຸກຍູ້ການອ່ານໃນລະດັບຕົ້ນ.

ຕາຕະລາງລຸ່ມນີ້ ແມ່ນແຂວງ ແລະ ເມືອງ ເປົ້າໝາຍຂອງໂຄງການ:

| ແຂວງ [15] | ເມືອງ [80] |
|---|---|
| ຜົ້ງສາລີ | ຜົ້ງສາລີ, ໃໝ່, ຍອດອູ, ບຸນໃຕ້,ສໍາພັນ [5] |
| ຫຼວງນໍ້າທາ | ລອງ, ນາແລ [2] |
| ອຸດົມໄຊ | ປາກແບງ, ງາ, ຮຸນ, ນາໝໍ້, ຫລາ [5] |
| ບໍ່ແກ້ວ | ພາອຸດົມ, ຕົ້ນເຜີ້ງ, ປາກທາ [3] |
| ຫຼວງພະບາງ | ງອຍ, ວຽງຄໍາ, ຈອມເພັດ, ນໍ້າບາກ. ໂພນທອງ, ນ່ານ [6] |
| ຫົວພັນ | ຊໍາເໜືອ, ເມືອງແອດ, ຊົບເບົາ, ຊໍາໃຕ້, ຫົວເມືອງ, ຊຽງຄໍ້, ວຽງທອງ, ວຽງໄຊ [8] |
| ຊຽງຂວາງ | ຄູນ, ພະໄຊ, ໜອງແຮດ, ຄໍາ [4] |
| ວຽງຈັນ | ແມດ, ໄຊສົມບູນ, ຮົ່ມ [3] |
| ບໍລິຄໍາໄຊ | ໄຊຈໍາພອນ [1] |
| ຄໍາມ່ວນ | ນາກາຍ, ບົວລະພາ, ມະຫາໄຊ, ຍົມມະລາດ, ຫີນບູນ, ໄຊບົວທອງ, ທ່າແຂກ [7] |
| ສະຫວັນນະເຂດ | ນອງ, ພະລານໄຊ, ພີນ, ທ່າພປາງທອງ, ເຊໂປນ, ວິລະບູລີ, ຊົນບູລີ, ອຸທຸມພອນ, ອາດສະພອນ, ສອງຄອນ, ອາດສະພັງທອງ, ໄຊບູລີ [12] |
| ສາລະວັນ | ຕຸ້ມລານ, ຕະໂອ້ຍ, ສະໝ້ວຍ, ເລົາງາມ, ສາລະວັນ, ລະຄອນເພງ, ໂຄງເຊໂດນ [7] |
| ເຊກອງ | ກະລຶມ, ທ່າແຕງ, ລະມາມ, ດາກຈຶງ [4] |
| ຈໍາປາສັກ | ສຸກຸມາ, ບາຈຽງຈະເລີນສຸກ, ປາກຊ່ອງ, ສະນະສົມບູນ, ຈໍາປາສັກ, ປະທຸມພອນ, ໂຂງ [7] |
| ອັດຕະປື | ພູວົງ, ສານໄຊ, ໄຊເສດຖາ, ສະໜາມໄຊ, ເຊກະມານ [5] |

ຮ່າງແຜນພັດທະນາຊົນເຜົ່າ ແລະ ຂໍ້ກໍານົດກ່ຽວກັບການປະຕິບັດຕໍ່ສະພາບແວດລ້ອມ ໄດ້ມີການກະກຽມເພື່ອຮອງຮັບບັນຫາຕ່າງໆກ່ຽວກັບຊົນເຜົ່າໃນໂຄງການ ໂດຍອີງຕາມຫຼັກການທະນາຄານໂລກ. ເອກະສານດັ່ງກ່າວນີ້ມີ ສະບັບພາສາລາວ ແລະ ອັງກິດ. ທ່ານໃດມີຄວາມສົນໃຈ ເອກະສານດັ່ງກ່າວແມ່ນມີຢູ່ ກະຊວງສຶກສາທິການ ແລະ ກິລາ. ກະຊວງສຶກສາທິການ ແລະ ກິລາຂໍຊວນເຊີນບັນດາທ່ານ ຜູ້ທີ່ມີຄວາມສົນໃຈຕ້ອງການອ່ານ ແລະ ປະກອບຄໍາເຫັນໃຫ້ກະຊວງສຶກສາທິການ ແລະ ກິລາ ດ້ວຍ.

**ກະລຸນາສົ່ງຄໍາຄິດເຫັນຂອງທ່ານເຖິງ:**

ທ່ານ ດຣ. ບຸນປັນ ໄຊມູນຕີ
ຮັກສາການ ຫົວໜ້າກົມແຜນການ
ກົມແຜນການ ກະຊວງສຶກສາທິການ ແລະ ກິລາ
ກະຊວງສຶກສາທິການ ແລະ ກິລາ
ໂທ/ແຟັກ: 856 - 21 243 672
ໂທ/ແຟັກ: 856 – 21 216 006,
ອີເມວ: edpiimoe@laopdr.com